ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ 156 /ທຫກ

ນະຄອນຫຼວງວຽງຈັນ, ວັນທີ 11 ສິງຫາ 2021

# ແຈ້ງການ

**ເຖິງ :** ພໍ່ແມ່ປະຊາຊົນ, ຊາວຄ້າຂາຍ, ພະນັກງານ, ທະຫານ ແລະ ຕຳຫຼວດ ໃນຂອບເຂດທົ່ວປະເທດ.

**ເລື່ອງ:** ການຊື້-ຂາຍ ແລະ ການຮັບຊຳລະດ້ວຍເງິນຄຣິບໂຕ.

- ອີງຕາມ ກົດໝາຍວ່າດ້ວຍ ລະບົບການຊຳລະ ສະບັບເລກທີ 32/ສພຊ, ລົງວັນທີ 7 ພະຈິກ 2017;
- ອີງຕາມ ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 55/ສພຊ, ລົງວັນທີ 22 ທັນວາ 2014;
- ອີງຕາມ ແຈ້ງການກ່ຽວກັບການນຳໃຊ້ ແລະ ລົງທຶນຊື້-ຂາຍເງິນຄຣິບໂຕ ສະບັບເລກທີ 314/ທຫກ, ລົງວັນທີ 29 ສິງຫາ 2018.

ຫ້ອງການ ທະນາຄານແຫ່ງ ສປປ ລາວ ຂໍຖືເປັນກຽດແຈ້ງມາຍັງ ພໍ່ແມ່ປະຊາຊົນ, ຊາວຄ້າຂາຍ, ພະນັກງານ, ທະຫານ ແລະ ຕຳຫຼວດ ໃນຂອບເຂດທົ່ວປະເທດ ຊາບທົ່ວເຖິງກັນວ່າ: ໃນປີ 2018 ທະນາຄານແຫ່ງ ສປປ ລາວ ໄດ້ອອກແຈ້ງການ ເພື່ອແຈ້ງເຕືອນໃຫ້ປະຊາຊົນມີສະຕິລະວັງຕົວໃນການຊື້-ຂາຍ ແລະ ຫຼີກລ່ຽງການຮັບຊຳລະດ້ວຍເງິນຄຣິບໂຕ ຊຶ່ງມາຮອດປັດຈຸບັນ ແມ່ນຍັງເຫັນມີກຸ່ມຄົນຈຳນວນໜຶ່ງໃນສັງຄົມລາວ ມີການຊື້-ຂາຍເງິນຄຣິບໂຕ ຜ່ານແພລດຟອມ (Platform) ຕ່າງປະເທດ ເປັນຕົ້ນແມ່ນ Binance. ນອກຈາກນີ້, ຍັງປະກົດເຫັນວ່າ ມີການຮັບຊຳລະຄ່າສິນຄ້າ ແລະ ຄ່າບໍລິການດ້ວຍເງິນຄຣິບໂຕໃນຮ້ານຄ້າຈຳນວນໜຶ່ງ.

ສະນັ້ນ, ຫ້ອງການ ທະນາຄານແຫ່ງ ສປປ ລາວ ຈຶ່ງຂໍແຈ້ງມາຍັງທ່ານ ດັ່ງນີ້:

1. ເງິນຄຣິບໂຕ ບໍ່ແມ່ນເງິນ ແລະ ບໍ່ແມ່ນເຄື່ອງມື ທີ່ສາມາດໃຊ້ຊຳລະໄດ້ຕາມກົດໝາຍຂອງ ສປປ ລາວ, ຊຶ່ງເຄື່ອງມືການຊຳລະ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 14 ຂອງກົດໝາຍວ່າດ້ວຍ ລະບົບການຊຳລະ ປະກອບມີ ເງິນສົດ, ບັດ, ແຊັກ, ເງິນໂອນ ແລະ ເງິນເອເລັກໂຕຣນິກ;
2. ການລົງທຶນ ຫຼື ຊື້-ຂາຍເງິນຄຣິບໂຕ, ປະຊາຊົນຄວນມີສະຕິລະມັດລະວັງ ແລະ ສຶກສາຂໍ້ມູນໃຫ້ລະອຽດເລິກເຊິ່ງເພາະວ່າເງິນຄຣິບໂຕ ມີຄວາມສ່ຽງຫຼາຍດ້ານ ເປັນຕົ້ນແມ່ນຄວາມສ່ຽງດ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ຄວາມສ່ຽງດ້ານລາຄາທີ່ຜັນຜວນສູງ, ຄວາມສ່ຽງດ້ານເຕັກໂນໂລຊີ ແລະ ອາດເປັນຊ່ອງທາງຂອງກຸ່ມຄົນບໍ່ດີໃຊ້ເພື່ອຫຼອກລວງ ຫຼື ສໍ້ໂກງປະຊາຊົນໄດ້;
3. ແພລດຟອມຕ່າງປະເທດທີ່ໃຫ້ບໍລິການຊື້-ຂາຍເງິນຄຣິບໂຕ ແມ່ນບໍ່ຖືກຮັບຮູ້ ແລະ ບໍ່ຢູ່ພາຍໃຕ້ການຄຸ້ມຄອງຂອງທະນາຄານແຫ່ງ ສປປ ລາວ. ກໍລະນີເກີດມີການສໍ້ໂກງ ຫຼື ຄວາມສ່ຽງໃນດ້ານຕ່າງໆຈະບໍ່ສາມາດຮ້ອງຟ້ອງພາກສ່ວນກ່ຽວຂ້ອງເພື່ອດຳເນີນຄະດີຕໍ່ພາກສ່ວນດັ່ງກ່າວໄດ້. ກໍລະນີພົບເຫັນການເຄື່ອນໄຫວທີ່ບໍ່ສອດ

ຄ່ອງກັບແຈ້ງການສະບັບນີ້ ສາມາດແຈ້ງ ຫຼື ສອບຖາມຂໍ້ມູນເພີ່ມຕື່ມໄດ້ທີ່ ພະແນກກວດກາລະບົບຊໍາລະ, ກົມຄຸ້ມຄອງລະບົບຊໍາລະສະສາງ, ທະນາຄານແຫ່ງ ສປປ ລາວ ທີ່ເບີໂທລະສັບ: 021 253596.

ແຈ້ງການສະບັບນີ້ ແມ່ນແຈ້ງປ່ຽນແທນແຈ້ງການສະບັບເລກທີ 314/ທຫ, ລົງວັນທີ 29 ສິງຫາ 2018.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງພໍ່ແມ່ປະຊາຊົນ, ຊາວຄ້າຂາຍ, ພະນັກງານ, ທະຫານ ແລະ ຕໍາຫຼວດ ໃນຂອບເຂດທົ່ວປະເທດ ເພື່ອໃຫ້ມີສະຕິລະມັດລະວັງໃນການຊື້-ຂາຍເງິນຄຣິບໂຕຢູ່ແພລດຟອມຕ່າງປະເທດ ແລະ ຫຼີກລ່ຽງການຊໍາລະ ແລະ ຮັບຊໍາລະດ້ວຍເງິນຄຣິບໂຕ.

**ຫົວໜ້າຫ້ອງການ**

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ເພັດສະຖາພອນ ແກ້ວວົງວິຈິດ